**Pre**

# ຄຳແນະນຳ ໃນການຂຽນຄຳຮ້ອງຂັ້ນຕຽມອະນຸບານ ສົກສຶກສາ 2007-2008

ຈົ່ງໃຊ້ໃບຄຳຮ້ອງຂັ້ນຕຽມອະນຸບານ ເພື່ອຮ້ອງຂໍເອົາ ໂຮງຮຽນຕາມການເລືອກຂອງທ່ານ ສຳຫລັບສົກສຶກສາ 2007-2008 ນີ້. ສຳຫລັບເລື້ອງຂ່າວເພີ່ມເຕີມອີກນັ້ນ ກະລຸນາເບິ່ງເອົາຄຳປຶກສາກັບ ໜັງສືຄູ່ມືໃນການຈົດຊື່ເຂົ້າຮຽນ ສຳຫລັບພໍ່ແມ່ ສົກ 2007-2008 ຫລື ໄປຫາສູກາງຈົດຊື່ແຫ່ງໃດແຫ່ງໜຶ່ງກໍໄດ້.

**ພາກສ່ວນທີ 1** – ຈົ່ງຂຽນ ທີ່ຢູ່ໃສ່ຕາມບ່ອນທີ່ເດັກຂອງທ່ານອາໄສຢູ່ (ທີ່ຢູ່ບ້ານ). ຖ້າເດັກທ່ານຫາກອາໄສຢູ່ ຫລາຍກວ່າ ໜຶ່ງບ້ານແລ້ວ ໃຫ້ຂຽນທີ່ຢູ່ອັນເປັນບ່ອນສຳຄັນຂອງເຂົາໃສ່.

**ພາກສ່ວນທີ 2** – ໃຊ້ໃບຄຳຮ້ອງອັນນີ້ ສຳຫລັບຂັ້ນຕຽມອະນຸບານ ເທົ່ານັ້ນ.

**ພາກສ່ວນທີ 3 (ຕາມໃຈຊອບ)** – ຈົ່ງຂຽນພາກສ່ວນນີ້ ຖ້າທ່ານຕ້ອງການໃຫ້ເດັກຂອງທ່ານເຂົ້າຢູ່ ໂຮງຮຽນບ່ອນດຽວກັບເດັກຜູ້ອື່ນ ທີ່ຢູ່ໃນຄອບຄົວດຽວກັນນີ້ເຂົ້າຢູ່. ເພື່ອໃຫ້ໄດ້ຕາມສິດໄດ້ກ່ອນໝູ່ ສຳຫລັບໂຮງຮຽນບ່ອນໜຶ່ງ ນັກຮຽນຕ້ອງອາໄສຢູ່ໃນຄອບຄົວດຽວກັນ ແລະ <u>ມີທີ່ຢູ່ບ້ານອັນດຽວກັນ</u> ກັບຜູ້ເປັນພີ່ນ້ອງກັນ ກັບເຂົານີ້. ແມ່ນຄວາມຮັບຜິດຊອບຂອງທ່ານເອງ ທີ່ຮັບປະກັນໃຫ້ ທີ່ຢູ່ບ້ານ ມີຢູ່ໃນບັນທຶກ ສຳຫລັບຜູ້ເປັນພີ່ນ້ອງກັນນີ້ ຕາມທີ່ທ່ານຂຽນລາຍກາຍລົງໃນພາກສ່ວນນີ້ ໃຫ້ເປັນອັນດຽວກັບທີ່ໄດ້ເອົາໃຫ້ ຢູ່ໃນພາກສ່ວນທີ 1. ມີທີ່ຢູ່ບໍ່ຈະແຈ້ງ ອາດເປັນຜົນກີດກັ້ນ ໃຫ້ ເດັກຂອງທ່ານບໍ່ໄດ້ຮັບຕາມສິດທີຄວນໄດ້ກ່ອນຂອງການມີພີ່ນ້ອງ ໃນໂຮງຮຽນນັ້ນ. ຍິ່ງໄປກວ່ານັ້ນ ຜູ້ເປັນພີ່ນ້ອງກັນນີ້ ຕ້ອງໄດ້ຖືກສັບຊ້ອນເຂົ້າໂຮງຮຽນບ່ອນນັ້ນ <u>ໃນສົກສຶກສາ 2007-2008</u> ນີ້. ການມີສິດທີໄດ້ກ່ອນ ຂອງຄວາມເປັນພີ່ນ້ອງກັນນີ້ ບໍ່ໄດ້ເປັນປໂຍດແກ່ ນັກຮຽນໃດ ຖ້າຫາກພີ່ນ້ອງຂອງເຂົາ ບໍ່ໄດ້ຖືກສັບຊ້ອນເຂົ້າ ໃນໂຮງຮຽນນັ້ນ ໃນປີໜ້າ.

**ພາກສ່ວນທີ 4** – ຈົ່ງໃຊ້ **ແຜ່ນເຈັ້ຍໃຫ້ຂຽນເລືອກເອົາຂັ້ນຕຽມອະນຸບານ** (ເປັນເຈັ້ຍຂຽນລອງເບິ່ງກ່ອນ) ຢູ່ຂ້າງລຸ່ມນີ້ ເພື່ອຊ່ວຍທ່ານຂຽນໃນພາກສ່ວນທີ 4. ຂັ້ນຕຽມອະນຸບານ ຢູ່ໃນເຈັ້ຍຂຽນລອງ ເບິ່ງກ່ອນນີ້ ໄດ້ແບ່ງອອກເປັນ ຕາມເກນອາຍຸຂອງເດັກນ້ອຍ 4 ປີ ແລະ ຂອງເດັກນ້ອຍ 3 ປີ. ຢູ່ຕາມເຈັ້ຍຂຽນລອງເບິ່ງນີ້ ຈົ່ງຂຽນຕົວເລກ ຕາມການເລືອກເອົາໂຮງຮຽນທີ່ທ່ານເອົາ ເປັນລຳດັບ ຕາມຄວາມມັກຫລາຍ ໂດຍເລີ່ມດ້ວຍ "1" ສຳຫລັບເລືອກເອົາອັນທີ ໜຶ່ງ. ຢູ່ໃນພາກສ່ວນທີ 4, ຈົ່ງໃຊ້ເຈັ້ຍຂຽນລອງເບິ່ງທີ່ໄດ້ເຮັດແລ້ວນັ້ນ ເພື່ອຂຽນໃສ່ ໃນການເລືອກເອົາໂຮງຮຽນຂອງ ທ່ານ. ເລີ່ມດ້ວຍການເລືອກເອົາອັນທີ ໜຶ່ງ ແລະ ຂຽນລົງດ້ວຍ ຕົວເລກໝາຍປະຈຳໂຮງຮຽນ ແລະ ຊື່ໂຮງຮຽນ ສຳຫລັບການເລືອກແຕ່ລະອັນ. ຖ້າທ່ານຫາກຂໍຮ້ອງເອົາໂຄງການຂອງໂຮງຮຽນ Graham Hill Montessori ໃຫ້ຂຽນລົງຕາມ ບ່ອນ box ໂຄງການໃຫ້ເລືອກທີ່ເໝາະສົມ ສຳຫລັບເດັກເກນອາຍຸ 4 ປີ ຫລື 3 ປີ; ຖ້າບໍ່ດັ່ງນັ້ນ ກໍຈົ່ງປະບ່ອນ box ນັ້ນເປົ່າວ່າງໄວ້. ຕົວຢ່າງຂ້າງລຸ່ມນີ້ ສະແດງບອກໃຫ້ຮູ້ວ່າ ຈະຂຽນລົງໃນ ພາກສ່ວນທີ 4 ນີ້ ແນວໃດ ຖ້າການເລືອກເອົາຂອງທ່ານຫາກແມ່ນ Graham Hill Montessori ເປັນອັນທີໜຶ່ງ ສຳຫລັບ ເດັກອາຍຸ 4 ປີ ແລະ ການເລືອກເອົາອັນທີສອງ ແມ່ນໂຮງຮຽນ New School:

| | School Number | School Name | Optional Program: Montessori: 4-year-olds | Optional Program: Montessori: 3-year-olds |
|---|---|---|---|---|
| 1 | 2 2 0 | **Graham Hill** | ● | ○ |
| 2 | 2 9 1 | **The New School** | ○ | ○ |

**ພາກສ່ວນທີ 5 (ຕາມໃຈຊອບ)** – ເດັກຂອງທ່ານຈະໄດ້ຖືກເອົາໃສ່ໄວ້ ໃນລາຍຊື່ລໍຖ້າ ສຳຫລັບການເລືອກເອົາໂຮງຮຽນຂອງທ່ານອັນທີໜຶ່ງ ຖ້າເຂົາຫາກບໍ່ໄດ້ສັບຊ້ອນເຂົ້າໃນໂຮງຮຽນນັ້ນ. ຖ້າທ່ານ ຢາກຈະໃຫ້ເດັກຂອງທ່ານ ມີຊື່ຢູ່ໃນລາຍຊື່ລໍຖ້າ ສຳຫລັບໂຮງຮຽນ ນອກເໜືອຈາກການເລືອກເອົາອັນທີໜຶ່ງຂອງທ່ານແລ້ວ ຈົ່ງໝາຍໃສ່ box ຢູ່ໃນພາກສ່ວນທີ 5 ແລະ ຂຽນຊື່ຂອງໂຮງຮຽນ ລໍຖ້າທີ່ທ່ານມັກກ່ອນໝູ່ໃສ່; ທ່ານອາດເລືອກເອົາ ຕາມການເລືອກຂອງທ່ານໃດໆກໍໄດ້ ຈາກພາກສ່ວນທີ 4. ເດັກຂອງທ່ານກໍຈະຖືກຂຽນໄວ້ຢູ່ ໃນລາຍຊື່ໂຮງຮຽນລໍຖ້າ ທີ່ທ່ານມັກຫລາຍກວ່າໝູ່ ເທົ່ານັ້ນ ຖ້າເຂົາຫາກ ໄດ້ຖືກສັບຊ້ອນເຂົ້າຢູ່ໂຮງຮຽນ ທີ່ໄດ້ໝາຍເອົາ ຕາມອັນດັບທີ່ຕ່ຳສຸດ ຢູ່ໃນໃບຄຳຮ້ອງ ກວ່າຢູ່ໃນລາຍຊື່ໂຮງຮຽນລໍຖ້ານັ້ນ. ບໍ່ດັ່ງນັ້ນ ໂຮງຮຽນລໍຖ້າ ກໍຈະ <u>ໝົດສິດລົງທີ່ການ ເລືອກເອົາໂຮງຮຽນອັນທີໜຶ່ງຂອງທ່ານ</u>. ເດັກຂອງທ່ານ ກໍອາດຈະມີຢູ່ແຕ່ລາຍຊື່ໂຮງຮຽນລໍຖ້າ ເທົ່ານັ້ນ.

## ເຈັ້ຍໃຫ້ຂຽນເລືອກເອົາລອງເບິ່ງ ຂັ້ນຕຽມອະນຸບານ

ຈົ່ງຂຽນຕົວເລກຕາມການເລືອກເອົາຂອງທ່ານ ເປັນລຳດັບທີ່ທ່ານມັກຫລາຍກວ່າໝູ່ລົງ ແລະ ຂຽນໃສ່ພາກສ່ວນທີ 4 ໃນໃບຄຳຮ້ອງຂັ້ນຕຽມອະນຸບານນີ້.

**4-year-old Children** (ເດັກ ອາຍຸ 4 ປີ)

☐ GRAHAM HILL Montessori: 4-year-olds ...................... 220

☐ THE NEW SCHOOL....................................................291

**3-year-old Children** (ເດັກ ອາຍຸ 3 ປີ)

☐ GRAHAM HILL Montessori: 3-year-olds ...................... 220